Australian Government
AusAID

Cardno ACIL

# ໂຄງການຕ້ານການຄ້າມະນຸດ ໃນພາກພື້ນອາຊີ (ARTIP)

ຂໍ້ລິເລີ່ມຂອງລັດຖະບານອົດສະຕາລີ

Australian Government
AusAID

ຂໍ້ລິເລີ່ມຂອງລັດຖະບານອົດສະຕາລີ

ເວັບໄຊ້: www.artipproject.org
ອີເມວ : info@artipproject.org

Cardno ACIL

## ສາມາດຕິດຕໍ່ພວກເຮົາໄດ້ທີ່:

**ຫ້ອງການໂຄງການປະຈໍາພາກພື້ນໃນປະເທດໄທ:**
1-7 ຊູລິກເຮົາສ, ຍູນິດ1A, ຊັ້ນ 4, ຖະໜົນ ສີລົມ, ບາງຣັກ,ບາງກອກ, ປະເທດໄທ 10500 **(1-7 Zuellig House, Unit 1A, 4th Floor, Silom Road, Bangrak, Bangkok, Thailand 10500)**
ໂທ: +66 2 636 0531-3
ໂທລະສານ: +66 2 636 0534

**ຫ້ອງການໂຄງການປະຈໍາປະເທດກໍາປູເຈຍ:**
ຖະໜົນ ສົມດັດ ໂສເທຍຣອດສ໌ 14, ກະຊວງຍຸຕິທໍາ, ພະນົມເປັນ, ກໍາປູເຈຍ (14 Somdach Sothearos Road, Ministry of Justice, Phnom Penh, Cambodia)
ໂທ/ໂທລະສານx: +855 23 990 810

**ຫ້ອງການໂຄງການປະຈໍາປະເທດມຽນມາ:**
ຖະໜົນເລກທີ 80 ເສັ້ນ 2, ສະເວ ຕວ່າງ ກາ, ເທດສະບານ ບາຮານ, ຢ່ານກຸ້ງ, ມຽນມາ (No. 80, Kanbawza Lane 2, Shwe Taung Gyar, Bahan Township, Yangon, Myanmar)
ໂທ: +951 513 171, 5
ໂທລະສານ: +951 513 150

**ຫ້ອງການໂຄງການປະຈໍາ ສປປ ລາວ:**
ກົມຕໍາຫຼວດກວດຄົນເຂົ້າເມືອງ,ກະຊວງປ້ອງກັນຄວາມສະຫງົບ, ບ້ານ ຫັດສະດີໃຕ້,ເມືອງຈັນທະບູລີ,ນະຄອນຫຼວງວຽງຈັນ ສປປ ລາວ (Immigration Department, Ministry of Public Security, Ban Hatsady Tai, Chanthaboury District, Vientiane, Lao PDR)
ໂທ: +856 21 262609
ໂທລະສານ: +856 21 262396






## ຂໍ້ລິເລີ່ມຂອງລັດຖະບານອົດສະຕາລີເພື່ອແກ້ໄຂບັນຫາການຄ້າມະນຸດໃນພາກພື້ນອາຊີ.

## ປັດສະຍາຂອງໂຄງການ

ການຕອບໂຕ້ຕໍ່ການຄ້າມະນຸດດ້ວຍລະບົບຍຸຕິທໍາທາງອາຍາທີ່ມີປະສິດທິພາບແມ່ນສິ່ງຈໍາເປັນຕໍ່ການຍຸຕິບັນຫາ ຜູ້ຄ້າມະນຸດ ສາມາດ ຫຼຸດພົ້ນຈາກ ການຖືກລົງໂທດເຊິ່ງມີຢູ່ໃນລະດັບສູງໃນປະຈຸບັນແລະຈໍາເປັນຕໍ່ການຮັບປະກັນຄວາມປອດໄພແລະຄວາມເປັນທໍາໃຫ້ແກ່ຜູ້ທີ່ຖືກຄ້າມະນຸດ.ບັນດາອົງປະກອບສໍາຄັນຂອງການຕອບໂຕ້ທີ່ມີປະສິດທິພາບຕໍ່ການຄ້າມະນຸດນັ້ນ ແມ່ນປະກອບດ້ວຍຂອບກົດໝາຍທີ່ເຂັ້ມແຂງແລະແທດເໝາະກັບສະພາບໂຕຈິງ;ອົງການຈັດຕັ້ງປະຕິບັດກົດໝາຍໃນແຖວໜ້າແລະອົງການຈັດຕັ້ງປະຕິບັດກົດໝາຍສະເພາະທີ່ມີຄວາມສາມາດ;ຜູ້ພິພາກສາແລະໄອຍະການທີ່ມີຄວາມຮູ້ກວ້າງຂວາງແລະທຸ້ມເທເຫື່ອແຮງໃສ່ການແກ້ໄຂບັນຫາດັ່ງກ່າວ;ລະບົບທີ່ຊ່ວຍລະບຸຜູ້ຖືກເຄາະຮ້າຍໄດ້ຢ່າງວ່ອງໄວແລະຖືກຕ້ອງ; ແລະ ບັນດາກົນໄກຕ່າງໆເພື່ອໃຊ້ສິ່ງເສີມການຮ່ວມມືລະຫວ່າງອົງການຕ່າງໆພາຍໃນລະບົບຍຸຕິທໍາທາງອາຍາທັງໃນລະດັບພາຍໃນປະເທດແລະ ລະຫວ່າງປະເທດ.ໃນທຸກຂັ້ນຕອນການດໍາເນີນງານ,ການຕອບໂຕ້ຕໍ່ການຄ້າມະນຸດທັງໃນລະດັບປະເທດແລະລະດັບພາກພື້ນ ຄວນສະທ້ອນໃຫ້ເຫັນລະບົບຍຸຕິທໍາທາງອາຍາແລະບັນດາມາດຕະຖານດ້ານສິດທິມະນຸດທີ່ເຫັນດີເປັນເອກະພາບໃນລະດັບສາກົນ.

## ປະຫວັດຄວາມເປັນມາຂອງໂຄງການ ARTIP

ໃນປີ 2003, ລັດຖະບານອົດສະຕາລີ ໄດ້ນໍາສະເໜີຂໍ້ລິເລີ່ມອັນໜຶ່ງສໍາລັບພາກພື້ນອາຊີໂດຍຮູ້ກັນໃນຊື່ໂຄງການຮ່ວມມືໃນພາກພື້ນອາຊີເພື່ອຕ້ານການຄ້າມະນຸດ (ARCPPT). ໂຄງການດັ່ງກ່າວເຊິ່ງໄດ້ສໍາເລັດລົງໃນທ້າຍເດືອນສິງຫາ 2006 ໄດ້ສະແຫວງຫາວິທີທາງເພື່ອອໍານວຍຄວາມສະດວກໃຫ້ແກ່ວິທີການດໍາເນີນງານຕ້ານອາຊະຍາກໍາຄ້າມະນຸດທັງພາຍໃນປະເທດແລະລະຫວ່າງປະເທດໃນລັກສະນະທີ່ມີປະສິດ ທິພາບແລະມີການປະສານງານທີ່ດີຂຶ້ນກວ່າເດີມ.ໂຄງການ ARCPPT ໄດ້ເຮັດວຽກຮ່ວມກັບບັນດາອົງການພາຍໃນລະບົບຍຸຕິທໍາທາງອາຍາຂອງປະເທດກໍາປູເຈຍ, ສປປ ລາວ, ມຽນ ມາ ແລະ ໄທ ແລະ ຍັງໄດ້ດໍາເນີນບາງກິດຈະກໍາຢູ່ປະເທດອິນໂດເນເຊຍ.ໂຄງການໄດ້ຮ່ວມມືຢ່າງໃກ້ຊິດກັບ ASEAN ແລະ ບັນດາກອງປະຊຸມສໍາຄັນໃນລະດັບພາກພື້ນທີ່ພົວພັນກັບວຽກງານຕ້ານການຄ້າມະນຸດເຊິ່ງໃນນັ້ນແມ່ນລວມເອົາທັງຂະບວນການ COMMIT.
ພາຍຫຼັງສໍາເລັດການທົບທວນວຽກຂອງໂຄງການ ARCPPT, ໄດ້ມີການຕົກລົງກັນວ່າ:ຈະສ້າງໂຄງການໃໝ່ຂຶ້ນມາເພື່ອສານຕໍ່ຈາກບັນດາຜົນສໍາເລັດອັນໃຫຍ່ຫຼວງທີ່ແຕ່ລະປະເທດແລະທັງໝົດທົ່ວພາກພື້ນຍາດມາໄດ້.








# ຂໍ້ລິເລີ່ມຂອງລັດຖະບານອົດສະຕຣາລີເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ແກ່ການຕອບໂຕ້ຕໍ່ການຄ້າມະນຸດພາຍໃນພາກພື້ນອາຊີດ້ວຍລະບົບຍຸຕິທຳທາງອາຍາ

**ໂຄງການ ARTIP ຈະສຸມໃສ່ການຍຸຕິບັນຫາຜູ້ຄ້າມະນຸດສາມາດຫຼຸດພົ້ນຈາກການຖືກລົງໂທດແລະການຮັບປະກັນຄວາມເປັນທຳໃຫ້ແກ່ຜູ້ຖືກເຄາະຮ້າຍ**



## ໂຄງການ

ARTIP ໄດ້ເລີ່ມຕົ້ນຈັດຕັ້ງປະຕິບັດໂຄງການໃນເດືອນສິງຫາ 2006 ແລະ ຄາດວ່າຈະດຳເນີນໄປເປັນເວລາຫ້າປີ. ຄ້າຍຄືກັນກັບໂຄງການທີ່ມີກ່ອນໜ້ານີ້, ARTIP ຈະສຸມໃສ່ການຕອບໂຕ້ຕໍ່ການຄ້າມະນຸດດ້ວຍລະບົບຍຸຕິທຳທາງອາຍາໂດຍຈະເນັ້ນໜັກເປັນພິເສດໃສ່ການຍຸຕິບັນຫາຜູ້ຄ້າມະນຸດສາມາດຫຼຸດພົ້ນ ຈາກ ການຖືກລົງໂທດ ແລະການຮັບປະກັນຄວາມເປັນທຳໃຫ້ແກ່ຜູ້ຖືກເຄາະຮ້າຍ.ໃນເບື້ອງຕົ້ນ ARTIP ຈະປະຕິບັດວຽກງານຢູ່ປະເທດກຳປູເຈຍ, ໄທ, ສປປ ລາວ ແລະ ມຽນມາ. ຈາກນັ້ນ, ພາຍໃນໄລຍະອາຍຸຂອງໂຄງການ ອາດຈະຂະຫຍາຍກິດຈະກຳຕ່າງໆຂອງໂຄງການໄປສູ່ບັນດາປະເທດສາມະຊິກອາຊຽນໂດຍສະເພາະປະເທດອິນໂດເນເຊຍ.ໄດ້ມີການສ້າງກົນໄກພິເສດຂຶ້ນມາເພື່ອຊ່ວຍໃນການລະບຸປະເທດທີ່ຈະມີການຂະຫຍາຍໂຄງການອອກໄປສູ່ກໍ່ຄືການລວມເອົາປະເທດເຫຼົ່ານັ້ນເຂົ້າເປັນສ່ວນໜຶ່ງຂອງໂຄງການ ARTIP ຢ່າງມີສິບຜົນສຳເລັດ.



## ການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ການຕອບໂຕ້ຕໍ່ການຄ້າມະນຸດດ້ວຍການບັງຄັບປະຕິບັດກົດໝາຍສະເພາະແລະກົດໝາຍທົ່ວໄປ

ທັງເຈົ້າໜ້າທີຕຳຫຼວດທົ່ວໄປແລະສະເພາະລ້ວນແຕ່ເປັນຂໍກະແຈສູ່ການຕອບໂຕ້ຕໍ່ການຄ້າມະນຸດດ້ວຍລະບົບຍຸຕິທຳທາງອາຍາພົບເລື້ອຍໆວ່າ: ເຈົ້າໜ້າທີ່ຕຳຫຼວດທົ່ວໄປແມ່ນຈຸດຕິດຕໍ່ທຳອິດທັງສຳລັບຜູ້ຖືກເຄາະຮ້າຍແລະຜູ້ຄ້າມະນຸດ, ສະນັ້ນຄວາມສາມາດຂອງເຂົາເຈົ້າໃນການລະບຸຜູ້ຖືກເຄາະຮ້າຍຢ່າງຖືກຕ້ອງແລະໃນການສະໜອງການຕອບໂຕ້ໃນເບື້ອງຕົ້ນດ້ວຍຮູບແບບໃດໜຶ່ງຈິ່ງຖືເປັນເລື່ອງທີ່ສຳຄັນຍິ່ງ. ເຈົ້າໜ້າທີ່ຕຳຫຼວດຕ້ານການຄ້າມະນຸດສະເພາະຈຳເປັນຕ້ອງດຳເນີນວຽກການສືບສວນ-ສອບສວນອາຊະຍາກຳຄ້າມະນຸດ ເຊິ່ງເປັນວຽກທີ່ສະຫຼັບຊັບຊ້ອນແຕ່ສຳຄັນຍິ່ງ.
ໂຄງການ ARTIP ຈະພະຍາຍາມສະແຫວງຫາວິທີເພື່ອປະກອບຄວາມຮູ້ແລະທັກສະຕ່າງໆທີ່ຈຳເປັນໃຫ້ແກ່ບັນດາອົງການຈັດຕັ້ງປະຕິບັດກົດໝາຍທົ່ວໄປແລະສະເພາະ. ທາງໂຄງການຈະສຸມຄວາມເອົາໃຈໃສ່ເປັນພິເສດໃນການສະໜັບສະໜູນບັນດາໜ່ວຍງານຕ້ານການຄ້າມະນຸດກໍ່ຄື ການຖະໜອມບຳລຸງບັນດາສາຍພົວພັນລະຫວ່າງໜ່ວຍງານເຫຼົ່ານັ້ນເພື່ອສິ່ງເສີມການຮ່ວມມືດ້ານການສືບສວນ–ສອບສວນລະຫວ່າງບັນດາປະເທດໂຄງການນຳກັນ.

## ການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ການຕອບໂຕ້ຕໍ່ການຄ້າມະນຸດຜ່ານທາງຕຸລາການແລະໄອຍະການ

ໂຄງການ ARTIP ຈະເຮັດວຽກເພື່ອປູກຈິດສຳນຶກແລະເພີ່ມຄວາມເຂົ້າໃຈກ່ຽວກັບການຄ້າມະນຸດໃຫ້ແກ່ກຸ່ມຜູ້ພິພາກສາແລະໄອຍະການເພື່ອຮັບປະກັນວ່າ: ຄະດີການຄ້າມະນຸດຈະໄດ້ຮັບການດຳເນີນຄະດີແລະຕັດສິນຢ່າງປະສິບຜົນສຳເລັດ.ນອກຈາກສະໜອງການການຊ່ວຍເຫຼືອໃນລະດັບຊາດແລ້ວ,ຍັງຈະລວມເອົາບັນດາກິດຈະກຳຕ່າງໆທີ່ມີເປົ້າໝາຍແນໃສ່ເພີ່ມການຮ່ວມມືດ້ານການດຳເນີນຄະດີລະຫວ່າງປະເທດ.

## ການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຂອບກົດໝາຍແລະນະໂຍບາຍ

.ກົດໝາຍທີ່ດີແມ່ນພື້ນຖານຂອງການຕອບໂຕ້ຕໍ່ການຄ້າມະນຸດດ້ວຍລະບົບຍຸຕິທຳທາງອາຍາ. ໂຄງການ ARTIP ຈະສະໜອງຄຳປຶກສາແລະການສະໜັບສະໜູນໃຫ້ແກ່ລັດຖະບານຂອງບັນດາປະເທດໂຄງການໃນດ້ານການສ້າງ ແລະ ຫຼືດັດແກ້ຂອບກົດໝາຍແຫ່ງຊາດຂອງເຂົາເຈົ້າທີ່ມີອ້ອມຂ້າງບັນຫາການຄ້າມະນຸດ.ຈຸດສຸມໃນດ້ານດັ່ງກ່າວນີ້ຈະຂະຫຍາຍກວ້າງໄປກວ່າການສ້າງກົດໝາຍຕ້ານການຄ້າມະນຸດສະເພາະເພື່ອໃຫ້ລວມເອົາບັນດາກົດໝາຍໃນດ້ານຕ່າງໆຕົວຢ່າງ:ນິຕິບັນຍັດທີ່ກ່ຽວຂ້ອງກັບການຟອກເງິນ,ການຊ່ວຍເຫຼືອເຊິ່ງກັນແລະກັນທາງດ້ານກົດໝາຍແລະການສົ່ງຜູ້ຮ້າຍຂ້າມແດນ.





ໂຄງການ ARTIP ຈະສະໜັບສະໜູນການພັດທະນາແລະຈັດຕັ້ງປະຕິບັດຂອບນະໂຍບາຍທີ່ເຂັ້ມແຂງກ່ຽວກັບການຕ້ານການຄ້າມະນຸດທັງໃນລະດັບຊາດແລະລະດັບພາກພື້ນ. ASEAN ຖືເປັນຄູ່ຮ່ວມງານທີ່ສຳຄັນໃນລະດັບພາກພື້ນສຳລັບໂຄງການ ARTIP ຍ້ອນອາຊຽນມີບົດບາດໃຈກາງໃນການພັດທະນາບັນດາມາດຕະຖານລວມ, ການແລກປ່ຽນວິທີການປະຕິບັດງານທີ່ດີທີ່ສຸດແລະນະໂຍບາຍລະດັບພາກພື້ນທີ່ເຂັ້ມແຂງເພື່ອຕ້ານການຄ້າມະນຸດ.

ແຜນງານດຳເນີນການຄົ້ນຄວ້າຂະໜາດນ້ອຍແຕ່ມີການກຳນົດຈຸດສຸມຢ່າງຮອບຄອບນັ້ນມີເປົ້າໝາຍແນ່ໃສ່ຈັດຕັ້ງປະຕິບັດຫຼືຈ້າງຜູ້ຊ່ຽວຊານໃຫ້ການດຳເນີນການຄົ້ນຄວ້າແນວໃໝ່ໃນຫົວຂໍ້ການຕອບໂຕ້ຕໍ່ການຄ້າມະນຸດດ້ວຍລະບົບຍຸຕິທຳທາງອາຍາເຊິ່ງເປັນຂົງເຂດທີ່ຍັງບໍ່ທັນໄດ້ມີການສຶກສາຫຼາຍເທື່ອ.

**ໂຄງການ ARTIP ຮັບຮູ້ຄວາມສຳຄັນຂອງການເຮັດວຽກຮ່ວມກັບແລະຜ່ານທາງບັນດາຄູ່ຮ່ວມງານລະດັບຊາດແລະພາກສ່ວນກ່ຽວຂ້ອງຕ່າງໆ ພ້ອມນັ້ນທາງໂຄງການຍັງສະແຫວງຫາວິທີດຳເນີນງານໃນລັກສະນະປະສານສົມທົບແລະຂໍຄຳປຶກສາ. ຫ້ອງການໂຄງການປະຈຳປະເທດກໍ່ຄືຫ້ອງການປະຈຳພາກພື້ນແມ່ນພ້ອມທີ່ຈະສະໜອງຂໍ້ມູນຂ່າວສານກ່ຽວກັບບັນດາແຜນການ,ກິດຈະກຳແລະຊັບພະຍາກອນຕ່າງໆຂອງໂຄງການ.ເວັບໄຊສໂຄງການ ARTIP ກໍ່ສະໜອງການເຂົ້າເຖິງຂໍ້ມູນຂ່າວສານທຸກຢ່າງກ່ຽວກັບໂຄງການຜ່ານທາງອິນເຕີເນັດເຊິ່ງລວມເອົາທັງບັນທຶກຂໍ້ມູນຂ່າວສານຈຳນວນໜຶ່ງກ່ຽວກັບໂຄງການ ARCPPT ກໍ່ຄືບັນດາຊັບພະຍາກອນໃນລະດັບປະເທດ, ພາກພື້ນແລະລະດັບສາກົນທີ່ພົວພັນກັບຈຸດສຸມຂອງໂຄງການ ARTIP.**